**<u>ATTACHMENT 4:</u> LIST OF APPROVAL LETTERS**



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

<u>ກະຊວງການຕ່າງປະເທດ</u>

ເລກທີ:.....069...../ຕປທ.ຈສກ.3.11

ນະຄອນຫຼວງວຽງຈັນ, ວັນທີ 14 ມັງກອນ 2014

ຮຽນ: ຫົວໜ້າຫ້ອງການກະຊວງສາທາລະນະສຸກ,

<u>ທີ່ ນະຄອນຫຼວງວຽງຈັນ.</u>

ເລື່ອງ: ການອະນຸມັດໃຫ້ທີມແພດຂອງມູນນິທິຟື້ນຟູສຸຂະພາບລາວ (LRF) ເຂົ້າມາເຄື່ອນໄຫວກວດສຸຂະພາບ ຢູ່ແຂວງອຸດົມໄຊ.

ກະຊວງການຕ່າງປະເທດຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ, ໂດຍອີງຕາມໜັງສືສະເໜີຂອງກະຊວງສາທາລະນະສຸກ, ສະບັບເລກທີ 0042/ສທ, ລົງວັນທີ 7 ມັງກອນ 2014, ກະຊວງການຕ່າງປະເທດເຫັນດີອະນຸມັດໃຫ້ກະຊວງສາທາລະນະສຸກຮັບເອົາທີມແພດອົງການ LRF ເຂົ້າມາກວດສຸຂະພາບໃຫ້ປະຊາຊົນ ແຂວງອຸດົມໄຊ ໃນລະຫວ່າງວັນທີ 20 – 29 ມັງກອນ 2014 ຕາມການສະເໜີ.

ດັ່ງນັ້ນ, ກະຊວງການຕ່າງປະເທດ ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ສຳເລັດຕາມແຜນການ ຕາມທາງຄວນດ້ວຍ.

ເຊັນແທນ ຫົວໜ້າຫ້ອງການ

ດາວສະຫອນ ບຸບຜາ

ຮອງຫົວໜ້າຫ້ອງການ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0042

ກະຊວງສາທາລະນະສຸກ

ເລກທີ ............../ສທ

ນະຄອນຫຼວງວຽງຈັນ, ວັນທີ 07 JAN 2014

ຮຽນ: ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ.

ເລື່ອງ: ຂໍອະນຸມັດຮັບເອົາທີມແພດ ຂອງມູນນິທິຟື້ນຟູສຸຂະພາບລາວ (LRF) ເຂົ້າມາ ໃຫ້ການບໍລິການກວດສຸຂະພາບ ໂດຍບໍ່ໄດ້ເສຍຄ່າ ໃຫ້ແກ່ພໍ່ແມ່ປະຊາຊົນ ທີ່ ແຂວງ ອຸດົມໄຊ ໃນລະຫວ່າງວັນທີ 20 ຫາ 29 ມັງກອນ 2014.

- ອີງຕາມ ໃບສະເໜີ ຈາກ ກົມປິ່ນປົວ ລະບັບເລກທີ 1859/ກປປ, ລົງວັນທີ 03 ທັນວາ 2013.
- ອີງຕາມ ໃບສະເໜີ ຂອງ ພະແນກສາທາລະນະສຸກ ແຂວງອຸດົມໄຊ ສະບັບເລກທີ 182/ພສທ, ລົງວັນທີ 06 ພະຈິກ 2013.
- ອີງຕາມ ໜັງສື ຈາກ ມູນນິທິຟື້ນຟູສຸຂະພາບລາວ ສະບັບລົງວັນທີ 05 ພະຈິກ 2013.

ກະຊວງສາທາລະນະສຸກ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອຂໍອະນຸມັດຮັບເອົາທີມແພດ ຂອງມູນນິທິຟື້ນຟູສຸຂະພາບລາວ (LRF); ເພື່ອເຂົ້າມາໃຫ້ການບໍລິການກວດສຸຂະພາບ (ຜ່າຕັດຄໍໝຽງ) ໃຫ້ແກ່ຄົນເຈັບທີ່ເປັນພະຍາດດັ່ງກ່າວ ໂດຍບໍ່ໄດ້ເສຍຄ່າ ທີ່ ໂຮງໝໍແຂວງ ອຸດົມໄຊ; ໂດຍສົມທົບກັບທີມແພດຂອງໂຮງໝໍແຂວງອຸດົມໄຊ, ຊ່ວງຊານຂອງໂຮງໝໍເຂດຖາທິຣາດ ແລະ ກົມປິ່ນປົວ. ການປະຕິບັດວຽກງານຂອງພວກກ່ຽວ ເລີ່ມແຕ່ວັນທີ 20 ຫາ 29 ມັງກອນ 2014. ດັ່ງມີລາຍລະອຽດລຸ່ມນີ້:

1. Mr. Bounmany Kyle KEOJAMPA, ສັນຊາດ ອະເມລິກາ, P/P No. 451798109.
2. Mr. Jacob Pieter NOORDZU, ສັນຊາດ ອະເມລິກາ, P/P No. 422050257.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານ ເພື່ອຄົ້ນຄວ້າພິຈາລະນາ ຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ຮສ.ດຣ. ບຸນກອງ ສີຫາວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*********************

ກະຊວງສາທາລະນະສຸກ

ກົມປິ່ນປົວ

1966

ເລກທີ....................../ກປປ

ນະຄອນຫຼວງວຽງຈັນ, ວັນທີ................. 27 DEC 2013

# ໃບແຈ້ງການ

**ເຖິງ:** ທ່ານຫົວໜ້າພະແນກສາທາລະນະສຸກແຂວງອຸດົມໄຊ .

**ເລື້ອງ:** ໃຫ້ແຕ່ງຕັ້ງທີມງານແພດປິ່ນປົວ ແລະ ຜ່າຕັດຕ່ອມຂັບຍ່ອຍໃນຄໍບຊຸດ.

- ອີງຕາມ: ສະໂໜດນຳສິ່ງຂອງຫ້ອງການກະຊວງສາທາລະນະສຸກເລກທີ 1170/ສທ.ຫກ, ລົງວັນທີ 26 ທັນວາ 2013 ເພື່ອໃຫ້ພະນັກງານ Endocrinologist ຈາກໂຮງໝໍສູນກາງ ແລະ ກະຊວງສາທາ ໄປຊ່ວຍ ແລະ ຕິດຕາມ ທີມງານແພດຜ່າຕັດຄໍໜຽງ ຂອງ ມູນນິທິຟື້ນຟູສຸຂະພາບລາວ ຢູ່ ແຂວງອຸດົມໄຊ.
- ອີງຕາມ: ການຄົ້ນຄວ້າ ແລະ ເຫັນດີຂອງກົມປິ່ນປົວ ກະຊວງສາທາລະນະສຸກ.

ກົມປິ່ນປົວ ກະຊວງສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງ ທ່ານຫົວໜ້າພະແນກສາທາລະນະສຸກ ແລະ ໂຮງໝໍແຂວງອຸດົມໄຊຊາບວ່າ: ທາງມູນນິທິຟື້ນຟູສຸຂະພາບລາວພ້ອມດ້ວຍວິຊາການຈາກສູນກາງຈະໄດ້ໄປດຳເນີນການຜ່າຕັດພະຍາດຕ່ອມຂັບຍ່ອຍໃນ ຢູ່ໂຮງໝໍແຂວງອຸດົມໄຊ ແຕ່ວັນທີ 20 – 29 ມັງກອນ 2014. ສະນັ້ນ ເພື່ອເປັນການສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ແກ່ໂຮງໝໍແຂວງຂອງພວກທ່ານ ຈຶ່ງຂໍໃຫ້ທ່ານຈັດຕັ້ງທີມງານເຂົ້າຮ່ວມກິດຈະກຳໃນຄັ້ງນີ້ດ້ວຍ ( ທ່ານໝໍພາຍໃນ, ຜ່າຕັດ, ວາງຢາສະຫຼົບ ແລະ ພະຍາບານຊ່ວຍ ).

ດັ່ງນັ້ນ, ທາງກົມປິ່ນປົວຈຶ່ງໄດ້ເຮັດໃບແຈ້ງການສະບັບນີ້ມາຍັງທ່ານເພື່ອຊາບ.

ຫົວໜ້າກົມປິ່ນປົວ

ກະຊວງສາທາລະນະສຸກ ກົມປິ່ນປົວ

ຮສ.ດຣ.ບຸນໜັກ ໄຊຊະນະສົງຄາມ

ສາທາລະນະລັດ ປະຊາທິໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ພະແນກສາທາລະນະສຸກແຂວງ

ໂຮງໝໍແຂວງອຸດົມໄຊ

ເລກທີ.....55........./ຮໝຂ

ອຸດົມໄຊ,ວັນທີ...8-1-2014

## ຂໍ້ຕົກລົງ

ຂອງຄະນະຄະອຳນວຍການໂຮງໝໍແຂວງອຸດົມໄຊ.

ວ່າດ້ວຍການແຕ່ງຕັ້ງທີມງານຜ່າຕັດຄໍໝຽງຢູ່ໂຮງໝໍແຂວງອຸດົມໄຊ.

- ອີງຕາມ: ແຈ້ງການກະຊວງສາທາລະນະສຸກ ແລະ ກົມປິ່ນປົວ ເລກທີ 1966/ກປປ ລົງວັນທີ 27/12/2013
- ອີງຕາມ: ຄວາມເຫັນດີເອກະພາບຂອງ ຄະນະອຳນວຍການຄັ້ງວັນທີ 31/12/2013

### ຄະນະອຳນວຍການຕົກລົງ

ມາດຕາ I ອານຸມັດແຕ່ງຕັ້ງພະນັກງານໂຮງໝໍແຂວງອຸດົມໄຊຈຳນວນ 06 ທ່ານເຂົ້າເປັນທີມງານຜ່າຕັດຕ່ອມຂັບຍ່ອຍໃນສົມທົບກັບທີມງານສູນກາງໂດຍທຶນມູນນິທິຟື້ນຟູສຸຂະພາບລາວໃນວັນທີ 20-29/01/2014 ເຊິ່ງມີລາຍຊື່ລຸ່ມນີ້:

1. ດຣ. ຄຳພູ ນາມມະວົງມີໄຊ ຮອງໜ່ວຍງານພາຍໃນ
2. ດຣ. ພອນສະມຸດ ຈະເລີນຜົນ ຮອງໜ່ວຍງານສຸກເສີນ-ມໍລະສຸມ
3. ດຣ. ຈັນສະນິດ ໂພທິລັກ ຊ່ຽວຊານຢາສະຫຼົບ
4. ດຣ. ບຸນອ່ອນ ຈັນທະວົງ ຊ່ຽວຊານຜ່າຕັດ
5. ພບ. ນ ສົມມະນີ ສີລະວົງ ພະຍາບານຫ້ອງພັກຟື້ນ
6. ພບ. ນ ຄອນພິດ ພວງມາລາ ພະຍາບານຫ້ອງພັກຟື້ນ

ມາດຕາ II ມອບໃຫ້ຫ້ອງການ,ຈັດຕັ້ງ,ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນປະຕິບັດຕາມຂໍ້ຕົກລົງສະບັບນີ້.

ມາດຕາ III ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

 ຂ. ຜູ້ອຳນວຍການໂຮງໝໍແຂວງອຸດົມໄຊ

ດຣ. ຄຳວົງ ຮົງດາລາ

Dr. Khamving HONGDALA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສາທາລະນະສຸກ

ພະແນກສາທາລະນະສຸກແຂວງອຸດົມໄຊ

ເລກທີ່ 182 /ພສທ

ອຸດົມໄຊ, ວັນທີ 06 NOV 2013

# ໃບສະເໜີ

**ຮຽນ:** ທ່ານລັດຖະມົນຕີວ່າການກະຊວງສາທາລະນະສຸກ ທີ່ນັບຖື.

ໂດຍຜ່ານກົມປິ່ນປົວ ແລະ ຫ້ອງການ ກະຊວງສາທາລະນະສຸກ.

**ເລື່ອງ:** ຂໍອະນຸມັດໃຫ້ ມູນນິທິຟື້ນຟູສຸຂະພາບ (Lao Rehabilitation Foundation, USA) ໂດຍສົມທົບກັບທີມແພດຈາກໂຮງໝໍແຂວງອຸດົມໄຊ ດໍາເນີນການຜ່າຕັດພະຍາດ ຄໍໜຽງ ຢູ່ໂຮງໝໍ ແຂວງອຸດົມໄຊ.

- ອີງຕາມ: ໃບສະເໜີໂຮງໝໍແຂວງ ສະບັບເລກທີ່ 76/ຮໝຂ, ລົງວັນທີ 05/11/2013.
- ອີງຕາມ: ໃບຮັບຮອງໃຫ້ການຊ່ວຍເຫຼືອຂອງມູນນິທິ ຟື້ນຟູສຸຂະພາບລາວ ລົງວັນທີ 5/11/2013.
- ອີງຕາມ: ການຄົ້ນຄ້ວາ ແລະ ເຫັນດີຂອງຄະນະພະແນກສາທາລະນະສຸກແຂວງອຸດົມໄຊ.

ທາງພະແນກສາທາລະນະສຸກ ແຂວງອຸດົມໄຊ ເຫັນວ່າແຜນກິດຈະກໍາດັ່ງກ່າວ ແມ່ນຖືກຕ້ອງ ແລະ ສອດຄ່ອງກັບແນວທາງ ແລະ ແຜນນະໂຍບາຍ ຂອງພະແນກສາທາລະນະສຸກ ວາງອອກ ກ່ຽວກັບວຽກງານສົ່ງເສີມ ແລະ ຄວບຄຸມພະຍາດ. ອີກຢ່າງໜຶ່ງ ມູນນິທິຟື້ນຟູສຸຂະພາບລາວ ເປັນມູນນິທິໜຶ່ງ ທີ່ດໍາເນີນຢູ່ລາວຢ່າງຖືກຕ້ອງ ຊຶ່ງເຄີຍໃຫ້ການຊ່ວຍເຫຼືອຕະຫຼອດມາ ກ່ຽວກັບບໍລິການ ການກວດ ແລະ ປິ່ນປົວພະຍາດ ລວມທັງເຄື່ອງມືອຸປະກອນການແພດໃຫ້ແກ່ບັນດາເມືອງ ຢູ່ 4 ແຂວງພາກເໜືອ ໂດຍສະເພາະແມ່ນແຂວງອຸດົມໄຊ, ມີກິດຈະກໍາ ການຜ່າຕັດສົບແວ່ງ, ເພດານໂວ່, ແຜແປ້ວ ແລະ ຜ່າຕັດພະຍາດຄໍໜຽງ, ຊຶ່ງທັງໝົດເຫັນວ່າ ໄດ້ສ້າງຜົນປະໂຫຍດອັນໃຫຍ່ຫຼວງຕໍ່ປະຊາຊົນຜູ້ທຸກຍາກ ແລະ ດ້ອຍໂອກາດ ລວມທັງຊ່ວຍພັດທະນາສາທາລະນະສຸກ ແຕ່ລະຂັ້ນ ຢູ່ແຂວງອຸດົມໄຊ ຕື່ມອີກ.

ດັ່ງນັ້ນ, ທາງພະແນກສາທາລະນະສຸກແຂວງອຸດົມໄຊ ຂໍຖືເປັນກຽດຢ່າງສູງ ຮຽນມາຍັງທ່ານ ເພື່ອຂໍອະນຸມັດໃຫ້ມູນນິທິຟື້ນຟູສຸຂະພາບລາວ ຮ່ວມກັບທີມງານແພດ ຈາກໂຮງໝໍແຂວງອຸດົມໄຊ ດໍາເນີນການຜ່າຕັດຄໍໜຽງ ໃຫ້ແກ່ຄົນເຈັບ ໂດຍບໍ່ໄດ້ເສຍຄ່າ ທີ່ຈະຈັດຂຶ້ນຢູ່ໂຮງໝໍແຂວງອຸດົມໄຊ ເປັນເວລາ 10 ວັນ, ເລີ່ມວັນທີ 20-29 ມັງກອນ 2014, ຊຶ່ງມີຈຸດປະສົງ ຊ່ວຍເຫຼືອຄົນເຈັບ ແລະ ພັດທະນາຄວາມຮູ້ຄວາມສາມາດໃຫ້ແກ່ທ່ານໝໍ ທີ່ໂຮງໝໍ ແຂວງອຸດົມໄຊ ດີຂຶ້ນເທື່ອລະກ້າວ. (ລາຍລະອຽດແຜນກິດຈະກໍາຕິດຂັດ).

ຫວັງຢ່າງຍິ່ງວ່າ ຈະໄດ້ຮັບການພິຈາລະນາ ແລະ ແກ້ໄຂຕາມທາງຄວນດ້ອຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ.

ຫົວໜ້າພະແນກສາທາລະນະສຸກແຂວງອຸດົມໄຊ

ພະແນກ ສາທາລະນະສຸກ ແຂວງອຸດົມໄຊ

ດຣ. ບຸນລຽນ ວົງປະສິດ

Dr. BounLian VONGPASITH

ສອບຖາມເພີ່ມເຕີມ: ດຣ. ເພັດສະໝອນ ອິນດາລາ, ໂຮງໝໍແຂວງອຸດົມໄຊ

ໂທ: 22203708

ແຟັກ: 081-212947

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ພະແນກສາທາລະນະສຸກແຂວງອຸດົມໄຊ

ໂຮງໝໍແຂວງອຸດົມໄຊ

ເລກທີ່ 76 /ຮໝຂ

ອຸດົມໄຊ, ວັນທີ..5-11-13.....

# ໃບສະເໜີ

**ຮຽນ:** ທ່ານຫົວໜ້າພະແນກສາທາລະນະສຸກແຂວງອຸດົມໄຊ

**ເລື່ອງ:** ຂໍອະນຸມັດໃຫ້ ມູນນິທິຟື້ນຟູສຸຂະພາບ (Lao Rehabilitation Foundation, USA) ໂດຍສົມທົບກັບທີມແພດຈາກໂຮງໝໍແຂວງອຸດົມໄຊ ດຳເນີນການຜ່າຕັດພະຍາດ ຄໍໜຽງ ຢູ່ໂຮງໝໍ ແຂວງອຸດົມໄຊ.

- ອີງຕາມ: ແຜນການປິ່ນປົວຜ່າຕັດພະຍາດຄໍໜຽງ ຂອງໂຮງໝໍແຂວງອຸດົມໄຊ ແລະ ມູນນິທິຟື້ນຟູສຸຂະພາບລາວ ໃນສົກປີ 2014.
- ອີງຕາມ: ໃບຮັບຮອງໃຫ້ການຊ່ວຍເຫຼືອຂອງມູນນິທິ ຟື້ນຟູສຸຂະພາບລາວ ລົງວັນທີ 5/11/2013.
- ອີງຕາມ: ການຄົ້ນຄ້ວາ ແລະ ເຫັນດີຂອງຄະນະໂຮງໝໍແຂວງອຸດົມໄຊ.

ທາງໂຮງໝໍແຂວງອຸດົມໄຊ ເຫັນວ່າແຜນກິດຈະກຳດັ່ງກ່າວ ແມ່ນຖືກຕ້ອງ ແລະ ສອດຄ່ອງກັບແນວທາງ ແລະ ແຜນນະໂຍບາຍຂອງໂຮງໝໍວາງອອກ ກ່ຽວກັບວຽກງານສົ່ງເສີມ ແລະ ຄວບຄຸມພະຍາດ. ອີກຢ່າງໜຶ່ງ ມູນນິທິຟື້ນຟູສຸຂະພາບລາວ ເປັນມູນນິທິໜຶ່ງ ທີ່ດຳເນີນຢູ່ລາວຢ່າງຖືກຕ້ອງ ຊຶ່ງເຄີຍໃຫ້ການຊ່ວຍເຫຼືອຕະຫຼອດມາ ກ່ຽວກັບບໍລິການ ການກວດ ແລະ ປິ່ນປົວພະຍາດ ລວມທັງເຄື່ອງມືອຸປະກອນການແພດ ໃຫ້ແກ່ບັນດາເມືອງ ຢູ່ 4 ແຂວງພາກເໜືອ ໂດຍສະເພາະແມ່ນແຂວງອຸດົມໄຊ, ໃນນັ້ນມີການຜ່າຕັດຄໍໜຽງ ທີ່ໄດ້ດຳເນີນມາແລ້ວ ຢູ່ໂຮງໝໍແຂວງອຸດົມໄຊ ເປັນຄັ້ງທີ່ 3, ຊຶ່ງທັງໝົດເຫັນວ່າ ໄດ້ສ້າງຜົນປະໂຫຍດອັນໃຫຍ່ຫຼວງຕໍ່ປະຊາຊົນຜູ້ທຸກຍາກ ແລະ ດ້ອຍໂອກາດ ລວມທັງຊ່ວຍພັດທະນາສາທາລະນະສຸກ ແຕ່ລະຂັ້ນ ຢູ່ແຂວງອຸດົມໄຊ ຕື່ມອີກ.

ດັ່ງນັ້ນ, ທາງໂຮງໝໍແຂວງອຸດົມໄຊ ຂໍຖືເປັນກຽດຢ່າງສູງ ຮຽນມາຍັງທ່ານ ເພື່ອຂໍອະນຸມັດ ໃຫ້ມູນນິທິຟື້ນຟູສຸຂະພາບລາວ ຮ່ວມກັບທີມງານແພດ ຈາກໂຮງໝໍແຂວງອຸດົມໄຊ ດຳເນີນການຜ່າຕັດຄໍໜຽງ ໃຫ້ແກ່ຄົນເຈັບ ໂດຍບໍ່ໄດ້ເສຍຄ່າ ທີ່ຈະຈັດຂຶ້ນຢູ່ໂຮງໝໍແຂວງອຸດົມໄຊ ເປັນເວລາ 10 ວັນ, ເລີ່ມວັນທີ 20-29 ມັງກອນ 2014, ຊຶ່ງມີຈຸດປະສົງ ຊ່ວຍເຫຼືອຄົນເຈັບ ແລະ ພັດທະນາໃຫ້ແກ່ທ່ານໝໍ ທີ່ໂຮງໝໍແຂວງອຸດົມໄຊ ໃຫ້ມີຄວາມຮູ້ ຄວາມສາມາດດີຂຶ້ນເທື່ອລະກ້າວ.

(ລາຍລະອຽດແຜນກິດຈະກຳຕິດຂັດ).

ຫວັງຢ່າງຍິ່ງວ່າ ຈະໄດ້ຮັບການພິຈາລະນາ ແລະ ແກ້ໄຂຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ.

ຄະນະອຳນວຍການໂຮງໝໍແຂວງອຸດົມໄຊ

ດຣ. ສຸວັນທອງ ແສນວັນນະຄາ
Dr. Souvanthong SENVANNAKHAM

ໂຮງໝໍແຂວງອຸດົມໄຊ
ຂາເຂົ້າ
ເລກທີ: 03.../ຮໝຂ
ວັນທີ: 5-11-13

LAO REHABILITATION FOUNDATION, Inc.
ມູນນິທິຟື້ນຟູສຸຂະພາບລາວ

USA: 86 El Nido Dr, CA 94559, USA * Tel: +1 707 486 0660 * Fax: +1 707 255 6787 * www.lao-foundation.org
Laos: Dept of Health * 009 Sisangvone Street, U. 01 – Thathluangtai, Saisettha District * Vientiane, Lao PDR * Tel: 856 21 454 381
ພະແນກສາທາລະນະສຸກກຳແພງ-ຂະແໜງຢາຟື້ນເມືອງ, ເຮືອນເລກທີ່ 009 - ຖະໜົນ ສີສັງວອນ - ໜ່ວຍ 01 ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ.

November 5, 2013.

Director of Oudomxay Provincial Public Health Department
Oudomxay Province, Lao PDR.

Dear Director of Oudomxay Provincial Public Health Department,

Following up on your letter of November 2, 2013, Lao Rehabilitation Foundation is pleased to inform you of our agreement to provide the necessary funds for the goiter (hyperthyroidism) mission at Oudomxay Hospital on January 20-29, 2014. As we did in the past, we will be happy to support the mission by providing foreign expert ENT surgeons, surgical instruments, medicine and other necessities for the mission.

Our goal is to provide care to patients free of charge, with no regard to gender, age, ethnic background or religion while developing the skills of Oudomxay Hospital medical staff. We plan to bring the necessary equipment and supplies from USA for this mission as well as some equipment and supplies to be donated to Oudomxay Hospital.

Should you need any additional information or have any inquiries please contact me at email: janssens@sonic.net or contact Dr. Phetsamone Indara (Oudomxay Provincial Hospital Eye Unit) by phone 22203708 or email: inda_oph@yahoo.com or contact Ms. Sasithone Sengchanh (LRF office in Vientiane) by hone 54455944.

We are looking forward to receiving soon the official approval for this mission.

Yours sincerely,

LAO REHABILITATION FOUNDATION, INC. · CALIFORNIA · USA · LRF

Dr. Luc Janssens, President LRF